ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

************

ທະນາຄານ ແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ ເລກທີ 231 /ກຄທສ

ແລະ ສະຖາບັນການເງິນ ນະຄອນຫຼວງວຽງຈັນ, ວັນທີ 02/07/2007

# ບົດແນະນຳ
# ການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍ
# ຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ

ກ ອີງຕາມຂໍ້ຕົກລົງ ວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ ສະບັບເລກທີ 330/ທຫລ, ລົງວັນທີ 02/07/2007.

ເພື່ອຮັບປະກັນການຈັດຕັ້ງປະຕິບັດຂໍ້ຕົກລົງ ວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນທົ່ວລະບົບທະນາຄານ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ຈຶ່ງໄດ້ອອກບົດແນະນຳເພີ່ມເຕີມ ຄືດັ່ງນີ້ :

<u>ກ່ຽວກັບຫຼັກຊັບຄ້ຳປະກັນ</u>

ການໃຫ້ສິນເຊື່ອຂອງທະນາຄານທຸລະກິດ ຕ້ອງບໍ່ເກີນ 90% ຂອງມູນຄ່າຫຼັກຊັບຄ້ຳປະກັນຕາມມູນຄ່າຕົວຈິງໃນທ້ອງຕະຫຼາດ ຊຶ່ງໄດ້ແຍກເປັນແຕ່ລະປະເພດ ດັ່ງລຸ່ມນີ້:

ຕາຕະລາງປະເພດຂອງຫຼັກຊັບຄ້ຳປະກັນ

| I | ຫຼັກຊັບຄ້ຳປະກັນປະເພດສັງຫາລິມະຊັບ | ອັດຕາສ່ວນ | ໝາຍເຫດ |
|---|---|---|---|
| 1 | ຄ້ຳປະກັນດ້ວຍວັດຖຸມີຄ່າ (ເພັດ, ພອຍ,ຄຳ, ຄຳຂາວ,ເງິນ) | ≤ 90% | |
| 2 | ການຄ້ຳປະກັນດ້ວຍເອກະສານມີຄ່າທາງການເງິນ | | |
| | 2.1 ພັນທະບັດລັດຖະບານ ແຫ່ງ ສປປ ລາວ | ≤90% | |
| | 2.2 ພັນທະບັດທະນາຄານ ແຫ່ງ ສປປ ລາວ | ≤90% | |
| | 2.3 ໃບຮຸ້ນກູ້ | ≤90% | |
| | 2.4 ໃບຮຸ້ນບຸລິມະສິດ | ≤90% | |
| | 2.5 ໃບຢັ້ງຢືນເງິນຝາກມີກຳນົດ | ≤90% | |
| | 2.6 ເງິນຝາກທະນາຄານ (ສະກຸນດຽວກັນກັບສິນເຊື່ອ) | ≤90% | |
| | ເງິນຝາກທະນາຄານ (ຕ່າງສະກຸນເງິນ) | ≤80% | |
| | 2.7 ໃບສັນຍາໃຊ້ໜີ້ PN | ≤80% | |
| | 2.8 L/C, L/G , B/G, SBLC | ≤80% | |
| 3 | ສິນຄ້າໃນສາງ (ຄຸນະພາບດີ ທີ່ຕະຫຼາດຕ້ອງການ) | ≤50% | ຄວນມີປະກັນໄພ |

| | | | |
|---|---|---|---|
| 4 | ໜີ້ຕ້ອງຮັບ (ຕ່ຳກວ່າ 90 ວັນ) | ≤80% | |
| 5 | ການອະນຸຍາດ (ສຳປະທານ) | ≤30% | |
| 6 | ຊັບສິນ ຫຼື ໝາກຜົນຂອງໂຄງການ ຫຼື ກິດຈະການ ໃດໜຶ່ງ ທີ່ຮັບປະກັນວ່າຈະເກີດຂຶ້ນຢ່າງແນ່ນອນໃນອະນະຄົດ. | ≤60% | |
| 8 | ພາຫະນະຮັບໃຊ້ | | |
| | 8.1 ພາຫະນະຮັບໃຊ້ (ພາຫະນະເບົາ) | ≤50% | ລວມມີປະກັນໄພ |
| | 8.2 ພາຫະນະຮັບໃຊ້ (ພາຫະນະກົນຈັກໜັກ) | ≤50% | ລວມມີປະກັນໄພ |
| II | **ຫຼັກຊັບຄ້ຳປະກັນປະເພດອະສັງຫາລິມະຊັບ** | **ອັດຕາສ່ວນ** | ຕ້ອງມີທີ່ຕັ້ງຢູ່ໃນສປປ ລາວ |
| 1 | ທີ່ດິນ | ≤60% | |
| 2 | ເຮືອນ | ≤60% | ລວມມີປະກັນໄພ |
| 3 | ຕຶກອາຄານ | ≤60% | ລວມມີປະກັນໄພ |
| 4 | ອາຄານໂຮງງານ | ≤60% | ລວມມີປະກັນໄພ |
| 5 | ເຄື່ອງຈັກຮັບໃຊ້ການຜະລິດ | ≤50% | |

ບົດແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮັກສາການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ

ທະນາຄານ ແຫ່ງ ສ.ປ.ປ.ລາວ ★ ກົມຄຸ້ມຄອງທະນາຄານທຸລະກິດ ★

ແສງເດືອນ ປັນຍາສິດ